ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ອົງການຕິດຕາມເສດຖະກິດມະຫາພາກອາຊຽນ+3 ເຂົ້າຢ້ຽມຂໍ່ານັບ ທ່ານຮອງຜູ້ວ່າການ ທຫລ ຜ່ານລະບົບອອນລາຍ



ໃນວັນທີ 28 ມັງກອນ 2022, ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ທ່ານ Toshinori Doi, ຜູ້ອໍານວຍການອົງການຕິດຕາມສະພາບເສດຖະກິດມະຫາພາກອາຊຽນ+3 (AMRO) ເພື່ອລາຍງານຜົນການປະເມີນເບື້ອງຕົ້ນສະພາບເສດຖະກິດມະຫາພາກຂອງ ສປປ ລາວ, ໂດຍຜ່ານລະບົບ Videoconference.

ກອງປະຊຸມໄດ້ປຶກສາຫາລື ແລະ ແລກປ່ຽນທັດສະນະກ່ຽວກັບສະພາບການພັດທະນາ ແລະ ທ່າອ່ຽງເສດຖະກິດມະຫາພາກຂອງ ສປປ ລາວ ພາຍຫຼັງທີ່ທີມງານ AMRO ໄດ້ເຄື່ອນໄຫວເຮັດວຽກກັບບັນດາກະຊວງ, ຫົວໜ່ວຍທຸລະກິດ ແລະ ສະຖາບັນການເງິນຂອງ ສປປ ລາວ ລະຫວ່າງວັນທີ 17-28 ມັງກອນ 2022. AMRO ໄດ້ປະເມີນວ່າໃນສະພາບທີ່ ສປປ ລາວ ກໍ່ຄືຫຼາຍປະເທດໃນທົ່ວໂລກໄດ້ປະເຊີນກັບຜົນກະທົບຂອງການແຜ່ລະບາດຂອງພະຍາດໂຄວິດ-19 ເສດຖະກິດຈະຂະຫຍາຍຕົວທີ່ລະດັບ 2,6% ໃນປີ 2021 ແລະ ຄາດວ່າຈະມີການຂະຫຍາຍຕົວເພີ່ມຂຶ້ນໃນລະດັບ 3,9% ໃນປີ 2022 ໂດຍໄດ້ຮັບການຊຸກຍູ້ຈາກຂະແໜງການພະລັງງານ, ການສົ່ງອອກສິນຄ້າກະສິກໍາ ແລະ ການຟື້ນຕົວຂອງຂະແໜງການທ່ອງທ່ຽວ. ນອກນີ້, ໃນໄລຍະ 6 ເດືອນທ້າຍປີ 2021 ແລະ 2022 ຍັງເຫັນວ່າອັດຕາເງິນເຟີ້ຍັງສືບຕໍ່ກົດດັນ ເນື່ອງຈາກດັດຊະນີລາຄາຜູ້ບໍລິໂພກເພີ່ມຂຶ້ນ 4,6% ໃນປີ 2022 ສາເຫດມາຈາກການນໍາເຂົ້າສິນຄ້າ ແລະ ຄວາມຕ້ອງການພາຍໃນຍັງສືບຕໍ່ຄົງທີ່.




ອົງການ AMRO ກໍ່ຍັງເຫັນໄດ້ເຖິງຄວາມສ່ຽງ ແລະ ສິ່ງທ້າທາຍທີ່ ສປປ ລາວ ຄວນເອົາໃຈໃສ່ເປັນຕົ້ນແມ່ນ ການເລັ່ງສັກວັກແຊັງ ຄຽງຄູ່ກັບເປີດກິດຈະກຳເສດຖະກິດຄືນ. ພ້ອມທັງ, ແນະນຳໃຫ້ ສປປ ລາວ ສືບຕໍ່ດຳເນີນນະໂຍບາຍຮັດກຸມງົບປະມານ ແລະ ນຳໃຊ້ນະໂຍບາຍເງິນຕາແບບຜ່ອນຄາຍເພື່ອສະໜັບສະໜູນການຟື້ນຟູເສດຖະກິດ. ນອກນັ້ນ, ອົງການ AMRO ໄດ້ມີການລາຍງານຄວາມຄືບໜ້າແຜນປັບປຸງກົນໄກການຮ່ວມມືຫຼາຍຝ່າຍພາຍໃຕ້ຂໍ້ລິເລີ່ມຊຽງໃໝ່ (CMIM) ຫຼື ກົນໄກການກູ້ຢືມ ແກ້ໄຂສະພາບຄ່ອງຂອງພາກພື້ນ ແລະ ແຜນການຊ່ວຍເຫຼືອທາງດ້ານວິຊາການ ໃຫ້ແກ່ ສປປ ລາວ.

ໃນທ້າຍກອງປະຊຸມ ທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ໄດ້ກ່າວຄຳຂອບໃຈຕໍ່ທາງອົງການ AMRO ພ້ອມທັງຄະນະທີ່ໄດ້ເອົາໃຈໃສ່ໃນການຕິດຕາມປະເມີນ ແລະ ໃຫ້ຄຳແນະນຳໃນການພັດທະນາເສດຖະກິດມະຫາພາກຂອງ ສປປ ລາວ ແລະ ການວາງນະໂຍບາຍຄຸ້ມຄອງເສດຖະກິດມະຫາພາກໃຫ້ມີຄວາມເຂັ້ມແຂງ.

**#ຂ່າວໂດຍ: ກົມຮ່ວມມືສາກົນ**

**#ພາບໂດຍ: ສົມພິດ ທຳມະວົງ**

## ຮັກບ້ານເກີດເມືອງນອນ ໃຊ້ຈ່າຍທອນ ເປັນເງິນກີບ